ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່ ເລກທີ : 1884/ທຄຕລ..2023.........

ນະຄອນຫລວງວຽງຈັນ, ວັນທີ:26 MAY 2023.........

# ໜັງສືແຈ້ງເຊີນ

**ເຖິງ**: ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ໃນນະຄອນຫຼວງວຽງຈັນ.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາຕໍ່ສັນຍາ MA Jboss Support License

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນ, ເພື່ອໃຫ້ການບໍລິການ ຕໍ່ສັນຍາ MA Jboss Support Licensed ມານຳໃຊ້ເຂົ້າໃນວຽກງານ ຂອງທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລຳດັບ | ລາຍການ | ຈຳນວນ |
|---|---|---|
| 1 | Red Hat Jboss Enterprise Application Platfrom, 16-Core premium x2 | 2 |
| 2 | Red Hat Jboss Enterprise Application Platfrom, 16-Core standard x2 | 2 |

- **ເງື່ອນໄຂໃນການບຳລຸງຮັກສາ (MA) Jboss support ມີດັ່ງນີ້:**

1. ບໍລິສັດທີ່ເຂົ້າຮ່ວມໃນການປະມູນຕ້ອງເປັນບໍລິສັດທີ່ເປັນ Partner ກັບບໍລິສັດ Redhat ເພື່ອຮັບປະກັນໃນການແກ້ໄຂບັນຫາ ແລະ support ໄດ້ທັນເວລາ.
2. ຕ້ອງໃຫ້ ທຄຕລ ສາມາດເປີດ Case online ກັບ Redhat ໄດ້ໂດຍກົງ.
3. ໃນກໍລະນີມີບັນຫາເກີດຂຶ້ນ ບໍລິສັດຕ້ອງມີສ່ວນຮ່ວມໃນການກວດ ແລະ ວິເຄາະບັນຫາ ຮ່ວມກັບ ທຄຕລ.
4. ມີການຕິດຕາມ ແລະ ໃຫ້ຄຳແນະນຳ ຕໍ່ ທຄຕລ ຢ່າງເປັນປະຈຳ.
5. ໃນການສະເໜີລາຄາແມ່ນຢາກໃຫ້ແຕ່ບໍລິສັດສະເໜີມາເປັນທາງເລືອກໃນການຕໍ່ສັນຍາ 01 ປີ, 02 ປີ ຫຼື 03 ປີ ເພື່ອໃຫ້ ທຄຕລ ພິຈາລະນາ.

- **ເງື່ອນໄຂຂອງບໍລິສັດ ທີ່ມີຄວາມຕ້ອງການຍື່ນຊອງປະມູນລາຄາ ຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

  ❖ **<u>ເອກະສານ ຊອງທີ1:</u>**

1. ປະກອບເອກະສານໃບນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021 ຫຼື 2022 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ.
2. ເອກະສານລາຍລະອຽດສະເປັກໜ້າວຽກ, ການຮັບປະກັນ, ໄລຍະເວລາການຈັດສົ່ງ License ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 09/06/2023 ເວລາ 11:00 ໂມງ** ໂດຍການສົ່ງຝາຍເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.

❖ **<u>ເອກະສານ ຊອງທີ2:</u> (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 7%, ໂດຍສະເໜີເປັນ 03 ທາງເລືອກ ຄື: MA 01 ປີ, 02 ປີ ຫຼື 03 ປີ, ໃບສະເໜີລາຄາຂອງຜູ້ສະໜອງມີອາຍຸຢ່າງໜ້ອຍ 01 ເດືອນ ຫລັງຈາກມື້ຍື່ນຊອງປະມູນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 15/07/2023)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນພະຫັດ **ວັນທີ 15/06/2023 ເວລາ 14:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

**<u>ໝາຍເຫດ:</u>**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

**ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ການຊຳລະແມ່ນຊຳລະ 100% ຂອງມູນຄ່າ ພາຍໃນ 25 ວັນ ພາຍຫຼັງຕິດຕັ້ງສຳເລັດ ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………..../ທຄຕລ, ລົງວັນທີ ………………….

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ....... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: